ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1411 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 13 ຕຸລາ 2022

# ແຈ້ງການ

**ເຖິງ:** ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.
**ເລື່ອງ:** ແຈ້ງປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງ ລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ເຖິງ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຊາບ ແລະ ປະຕິບັດ ດັ່ງນີ້:

1. ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 850 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 1.620 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 1.660 ກີບ/ລິດ.
ລາຄາຕາມຕາຕະລາງລຸ່ມນີ້ ແມ່ນຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 24.360 | 25.210 | 850 | 3,49 | |
| 2 | ອຊ ທຳມະດາ | 19.080 | 20.700 | 1.620 | 8,49 | |
| 3 | ກາຊວນ | 18.800 | 20.460 | 1.660 | 8,83 | |

(ສຳລັບລາຄາຂາຍຍ່ອຍໃນເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ)

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 14 ຕຸລາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0977/ກຄພນ, ລົງວັນທີ 12 ຕຸລາ 2022 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ.
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1377/ອຄ, ລົງວັນທີ 06 ຕຸລາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ

<u>ບ່ອນສົ່ງ:</u>
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 14 ຕຸລາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 25,210 | 20,700 | 20,460 |
| 2 | ແຂວງຜົ້ງສາລີ | 25,850 | 21,340 | 21,100 |
| 3 | ແຂວງຫຼວງນ້ຳທາ | 25,570 | 21,060 | 20,820 |
| 4 | ແຂວງອຸດົມໄຊ | 25,690 | 21,180 | 20,940 |
| 5 | ແຂວງບໍ່ແກ້ວ | 25,310 | 20,800 | 20,560 |
| 6 | ແຂວງຫຼວງພະບາງ | 25,580 | 21,070 | 20,830 |
| 7 | ແຂວງໄຊຍະບູລີ | 25,460 | 20,950 | 20,710 |
| 8 | ແຂວງຫົວພັນ | 25,610 | 21,100 | 20,860 |
| 9 | ແຂວງຊຽງຂວາງ | 25,400 | 20,890 | 20,650 |
| 10 | ແຂວງວຽງຈັນ | 25,210 | 20,700 | 20,460 |
| 11 | ແຂວງບໍລິຄຳໄຊ | 25,290 | 20,780 | 20,540 |
| 12 | ແຂວງຄຳມ່ວນ | 25,240 | 20,730 | 20,490 |
| 13 | ແຂວງສະຫວັນນະເຂດ | 25,240 | 20,730 | 20,490 |
| 14 | ແຂວງສາລະວັນ | 25,420 | 20,910 | 20,670 |
| 15 | ແຂວງຈຳປາສັກ | 25,270 | 20,760 | 20,520 |
| 16 | ແຂວງເຊກອງ | 25,420 | 20,910 | 20,660 |
| 17 | ແຂວງອັດຕະປື | 25,450 | 20,940 | 20,700 |
| 18 | ແຂວງໄຊສົມບູນ | 25,490 | 20,980 | 20,740 |

ນະຄອນຫຼວງວຽງຈັນ, ວັນທີ 13 ຕຸລາ 2022

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ພູວຽງ ພົງສາ